ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 30 ຕຸລາ ຫາ 03 ພະຈິກ 2023




## ສປປ ລາວ ມີແຜນເຊັນສັນຍາ ເພື່ອສົ່ງອອກ ພືດ ແລະ ຜະລິດຕະພັນພືດ ໄປ ສປ ຈີນ ເພີ່ມອີກ 16 ລາຍການ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ສປປ ລາວ ມີແຜນເຊັນສັນຍາ ເພື່ອສົ່ງອອກ ພືດ ແລະ ຜະລິດຕະພັນພືດ ໄປ ສປ ຈີນ ເພີ່ມອີກ 16 ລາຍການ

ໃນກອງປະຊຸມ ປຶກສາຫາລື ບາງວຽກງານໃນຂົງເຂດກະສິກຳ ແລະ ປ່າໄມ້ ແລະ ການຈັດຕັ້ງປະຕິບັດ ໜ້າວຽກຈຸດສຸມ ຂອງຄະນະສະເພາະກິດ 19/ກມສພ ທີ່ຈັດຂຶ້ນໃນຕອນບ່າຍວັນທີ 19 ຕຸລາ 2023 ຜ່ານມາ, ໂດຍການເປັນປະທານຮ່ວມຂອງ ທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ແລະ ທ່ານ ອາລຸນໄຊ ສູນນະລາດ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫົວໜ້າກອງເລຂາຄະນະສະເພາະກິດ 19/ກມສພ, ໂດຍມີຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ຫົວໜ້າຫ້ອງການ, ກົມ, ສະຖາບັນ, ທີມງານຄະນະສະເພາະກິດ ແລະແຂກຖືກເຊີນເຂົ້າຮ່ວມ, ຈຸດສົງຂອງການປຶກສາຫາລືຄັ້ງນີ້ແມ່ນເພື່ອຊຸກຍູ້ການຈັດຕັ້ງປະຕິບັດທິດຊີ້ນຳຂອງລັດຖະບານ ແລະ ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດແຜນວຽກຈຸດສຸມຂອງຄະນະສະເພາະກິດສະບັບເລກທີ 01/ນຍ ທີ່ຕິດພັນກັບພາລະບົດບາດຂອງກະຊວງກະສິກຳ ແລະ ປ່າໄມ້, ການຈັດຕັ້ງຜັນຂະຫຍາຍມະຕິຕົກລົງ ສະບັບເລກທີ 19/ກມສພ, ລົງວັນທີ 30 ມິຖຸນາ 2023 ວ່າດ້ວຍການແກ້ໄຂບັນຫາເຄັ່ງຮ້ອນ ຂອງເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນເງິນຕາ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດທີ່ຂະແໜງການກະສິກຳ ແລະ ປ່າໄມ້ ພວມຈັດຕັ້ງປະຕິບັດ.

ໃນທີ່ປະຊຸມທ່ານ ປອ. ເພັດ ພົມພິພັກ



ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ ມີຄຳເຫັນວ່າ: ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ແມ່ນກຳລັງຈັດຕັ້ງປະຕິບັດ 2 ວຽກຈຸດສຸມ ຄື: 1) ຊຸກຍູ້ສົ່ງເສີມການຜະລິດກະສິກຳ ເພື່ອທົດແທນການນຳເຂົ້າ ທັງເພື່ອຫຼຸດຜ່ອນການໄຫຼອອກເງິນຕາໄປຕ່າງປະເທດ ແລະ 2) ສຸມໃສ່ການຊຸກຍູ້ການຜະລິດກະສິກຳ ຕິດພັນກັບການປຸງແຕ່ງເປັນສິນຄ້າ ເພື່ອສົ່ງອອກໄປຕ່າງປະເທດ ນຳເອົາເງິນຕາ ເຂົ້າມາໃຫ້ຫຼາຍຂຶ້ນ, ເຊິ່ງຜ່ານມາ ດ້ານນິຕິກຳແມ່ນ ໄດ້ສຳເລັດຫຼາຍດ້ານ ໂດຍສະເພາະ 8 ນະໂຍບາຍການປູກ ແລະ 8 ນະໂຍບາຍການລ້ຽງ.

ຜ່ານການຈັດຕັ້ງປະຕິບັດ ຜ່ານມາ ອີງຕາມບົດລາຍງານຂອງລັດຖະບານ 6 ເດືອນຕົ້ນປີ ສະບັບເລກທີ 100/ສພຊ ຄາດຄະເນວ່າ ຂະແໜງກະສິກຳ ມີການຂະຫຍາຍຕົວ 3,8%, ກວມເອົາ 14,6% ຂອງ GDP ແລະ ມາຮອດ 9 ເດືອນຕົ້ນປີ 2023 ໄດ້ມີຜົນສຳເລັດ ຄື: ການຜະລິດເຂົ້າ ປີ 2023 ສາມາດປະຕິບັດເນື້ອທີ່ປູກ ໄດ້ 1.023.367 ເຮັກຕາ, ຄາດຄະເນ ເນື້ອທີ່ເກັບກ່ຽວ 993.672 ເຮັກຕາ, ຜົນຜະລິດປະມານ 3,97 ລ້ານໂຕນ, ທຽບໃສ່ຄວາມຕ້ອງການບໍລິໂພກພາຍໃນ ແລະ ແຮໄວ້ 2.5 ລ້ານໂຕນ; ການຜະລິດຊີ້ນ, ໄຂ່ ແລະ ປາ ສາມາດຜະລິດໄດ້ ທັງໝົດ 423.480 ໂຕນ ເທົ່າກັບ 79,75% ຂອງແຜນການ (ແຜນການ: 531.000 ໂຕນ). ໃນນັ້ນ, ຜະລິດຊີ້ນ ໄດ້ທັງໝົດ 198.740 ໂຕນ, ໄຂ່ 37.800 ໂຕນ ແລະ ປາ 186.940 ໂຕນ, ເຮັດໃຫ້ອັດຕາການບໍລິໂພກ ຊີ້ນ, ໄຂ່ ແລະ ປາ ໂດຍສະເລ່ຍ ບັນລຸໄດ້ 68 ກິໂລກຣາມ/ຄົນ/ປີ ເຫຼືອກິນປະມານ 1.4 ລ້ານໂຕນຕໍ່ປີ, ສາມາດຄ້ຳປະກັນການບໍລິໂພກພາຍໃນໄດ້ຢ່າງພຽງພໍ.

ໄດ້ສຳເລັດ ການເຈລະຈາເຕັກນິກເປີດຕະຫຼາດ ໄດ້ທັງໝົດ 48 ລາຍການ, ໃນນັ້ນ ກັບ ສປ ຈີນ 17 ລາຍການ (1 ລາຍການສັດໃຫຍ່), ກັບ ສສ ຫວຽດນາມ 15 ລາຍການ ແລະ ກັບ ໄທ 16 ລາຍການ, ໄດ້ກະກຽມເຊັນສັນຍາ ກັບ ສປ ຈີນ ເພີ່ມ




ອີກ 16 ລາຍການ ຄື: ໝາກມ່ວງສົດ, ໝາກມ່ວງຫິມະພານ, ພືດເປັນຢາ 12 ລາຍການ ແລະ ຂີງ 2 ຊະນິດ, ຄາດວ່າ ຈະເຊັນສັນຍາ ພາຍໃນເດືອນ ຕຸລາ 2023 ນີ້.

ການສົ່ງອອກຜະລິດຕະພັນກະສິກຳ ແລະ ປ່າໄມ້ໃນເດືອນມັງກອນ ຫາ ເດືອນກັນຍາ ປີ 2023 ປະຕິບັດໄດ້ 1.226,7 ລ້ານກວ່າ ໂດລາສະຫະລັດ ລື່ນແຜນການ 2,22% (ແຜນການຕາມສະພາຮັບຮອງ 1.200 ລ້ານ ໂດລາສະຫະລັດ). ໃນນັ້ນ, ການສົ່ງອອກພືດ ແລະ ຜະລິດຕະພັນພືດ ຜ່ານດ່ານກັກກັນພືດສາກົນ (ນັບແຕ່ ເດືອນ ມັງກອນ ຫາ ທ້າຍເດືອນ ສິງຫາ ປີ 2023) ມີການສົ່ງອອກຈຳນວນ 4,98 ລ້ານໂຕນ, ມີມູນຄ່າທັງໝົດ 982,4 ລ້ານ ໂດລາສະຫະລັດ ທຽບໃສ່ແຜນການ ປະຕິບັດໄດ້ແລ້ວ 89% (ແຜນການປີ 1.100 ລ້ານໂດລາສະຫະລັດ), ພືດທີ່ພົ້ນເດັ່ນໃນການສົ່ງອອກ ແມ່ນ: ກາເຟ, ເຂົ້າ, ໝາກກ້ວຍ, ມັນຕົ້ນ, ສາລີ, ອ້ອຍ, ໝາກໂມ ແລະ ອື່ນໆ, ສາມາດສົ່ງອອກສັດລ້ຽງໄດ້ ໄດ້ທັງໝົດ 61 ລ້ານ ໂດລາສະຫະລັດ (ແຜນການ 100 ລ້ານ ໂດລາສະຫະລັດ).

ນອກຈາກນີ້, ໃນກອງປະຊຸມດັ່ງກ່າວ ຍັງໄດ້ມີການປຶກສາຫາລື ແລະ ຊີ້ແຈງລາຍລະອຽດຕາມຄຳເຫັນເຈາະຈີ້ຂອງຄະນະສະເພາະກິດ 19/ ກມສພ, ກ່ຽວກັບການຄັດເລືອກຜູ້ປະກອບການໂຮງສີເຂົ້າ ເພື່ອສ້າງເປັນຄັງແຮ່ເຂົ້າ ແລະ ການແກ້ໄຂການສົ່ງອອກສາລີ ຢູ່ ແຂວງ ໄຊຍະບູລີ ຕື່ມອີກ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພູດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;